# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ຂີ້ໝິ້ນ

(ສະບັບທົດລອງ)



ຂຽນໂດຍ: ທ້າວ ເກດສະໜາ

ຂໍ້ມູນຈາກ: ບ້ານຫ້ອມ ເມືອງຫາດຊາຍຟອງ ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ຂີ້ໝິ້ນ

ຮີບໂຮມແລະຈັດໜ້າໂດຍ: ນາງ ຈັນທະຈອນ ຊຸມພົນພັກດີ

ແຕ້ມໂດຍ: ທ້າວ ສິດປະກອນ ທົງອາມາດ

ຮຽບຮຽງໂດຍ: ອ ຈ ໂພໄຊຈັນທະວົງສ

ອ.ຈ ເກດມະນີ ບັນດາລັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລົ່ງ ແສງດາລາ

ອ.ຈ ທອງຂັນ ສີລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງ ແລະ

ສູນອົບຮົມຮ່ວມພັດທະນ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນເຫຼັ້ມນີ້ ໄດ້ມາຈາກການຂຽນ ຂອງອາສາສະໝັກ ຊຶ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກຄະນະອຳນວນການສູນອົບຮົມຮ່ວມພັດທະນາ.

ປື້ມເຫຼັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງ ເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປ. 1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າ ປື້ມເຫຼັ້ມນີ້ຄົງ ເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກ ທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບອະໄພຈາກທຸກໆທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນກ່ຽວກັບ

ຂີ້ໝິ້ນແມ່ນພືດຊະນິດໜຶ່ງທີ່ມີຫົວທາງໃນທີ່ມີສີເຫຼືອງທີ່ປະຊາຊົນມາໃຊ້ຫົວຂີ້ໝິ້ນເຮັດເປັນຢາພື້ນເມືອງ ແລະນຳມາໄປປະກອບອາຫານ ແລະ ໃຊ້ເປັນເຄືອງປະສົມໃນເຄື່ອງສຳອາງ ແລະອື່ນໆອີກສະນັ້ນປະຊາຊົນໃນທ້ອງຖິ່ນຈຶ່ງນິຍົມປູກມາແຕ່ດົນນານແລ້ວ

+ **ອຸປະກອນ:**

- ຫົວຂີ້ໝິ້ນທີ່ມີຕາຢ່າງຫລວງຫຼາຍ



- ສຽມທີ່ຈະເອົາມາຂຸດດິນ



PDF created with pdfFactory Pro trial version www.pdffactory.com

- ຝຸ່ນ



+ **ວິທີປູກ**

ເຮົາກຽມດິນແລະຂຸດດິນເປັນຂຸມເຮັດເປັນໜານກໍໄດ້ຫຼັງຈາກນັ້ນເຮົານໍາເອົາຕາຂອງຫົວຂີ້ໝິ້ນທີ່ກຽມໄວ້ມານັ້ນເອົາລົງປູກ(ຫຼືເອົາລົງດິນ).



ຈາກນັ້ນເອົາດິນລົງຖົມຫົວຂີ້ໝິ້ນ ຈຶ່ງຫົດນໍ້າ, ຫຼັງຈາກນັ້ນປະໄວ້ປະມານ 1 ອາທິດກໍຈະມີໜໍ່ອອກມາ.



PDF created with pdfFactory Pro trial version www.pdffactory.com

ຖ້າໝັ້ນຫົດນຳໃຫ້ດິນຊຸ່ມຕະຫຼອດຂີ້ໝີ້ນກໍຈະງາມແລະແຕກຫົວຂະຫຍາຍໜໍ່ແຕກອອກຕະຫຼອດເພາະຂີ້ໝີ້ນມັກຄວາມຊຸ່ມ



+ **ຄຸນປະໂຫຍດ:**

- ໃຊ້ເປັນຢາທາພາຍນອກເຊັ່ນ: ທາຕຸ່ມຄັນຄາຍ, ທາໃບໜ້າເພື່ອແກ້ສິວ ແລະໃຊ້ທາບາດແຜທີ່ເປັນແຜໃນຕາມຮ່າງກາຍຂອງຄົນເຮົາ

- ນອກນີ້ເພິ່ນຍັງໃຊ້ຂີ້ໝີ້ນຜະລິດເປັນເຄື່ອງສຳອາງຕື່ມອີກດ້ວຍແລະຍັງເປັນຢາປົວພາຍໃນ ເຊັ່ນ: ນຳໄປຕົ້ມກັບສະໝຸນໄພອື່ນກິນເພື່ອແກ້ອາການຊັກກ່ຽວກັບເອັນແລະເສັ້ນປະສາດ

- ນອກນີ້ເພິ່ນຍັງເອົາຂີ້ໝີ້ນປະສົມກັບສະໝຸນໄພຕ່າງໆ
- ໃຊ້ປະສົມກັບນ້ຳເພື່ອເຮັດນ້ຳອົບນາຫອມສັກສິດເພື່ອປະກອບພິທີຕ່າງໆເຊິ່ງເອີ້ນວ່ານ້ຳຮົດ ຫຼື ນ້ຳມົນ.

PDF created with pdfFactory Pro trial version www.pdffactory.com

## ກາບ: ຂີ້ໝິ້ນ

| | |
|---|---|
| ຢູ່ບ້ານຂ້ອຍ | ມັກປູກຂີ້ໝິ້ນ |
| ເອົາແຕ່ງກິນ | ເປັນຢາກໍໄດ້ |
| ຈະເອົາໄປ | ຂາຍໄດ້ກໍດີ |
| ຖ້າຢາກມີ | ຕ້ອງປູກໃຫ້ຫຼາຍ |

## ເຊີ້ງ: ມາປູກຂີ້ໝິ້ນ

ໂຮ................................................ຮິວ

| | |
|---|---|
| ເຮົາມາເຮົາມາ | ມາປູກຂີ້ໝິ້ນ |
| ເອົາແຕ່ງກິນ | ເປັນຢາກໍໄດ້ |
| ເອົາໄປໃຊ້ | ທາໜ້າກໍໄດ້ |
| ເພາະມັນມີ | ຄຸນປະໂຫຍດຫຼາຍຢ່າງ |
| ທັງມີແນວທາງ | ຈະເອົາໄປຂາຍ |
| ເອົາຫ້ອນໄວ້ | ຫຼາຍເທົ່າໃດຍິ່ງດີ |
| ຖ້າຢາກມີ | ຕ້ອງປູກໃຫ້ຫຼາຍ |
| ມັນຈະກາຍ | ໄປເປັນສິນຄ້າ. |

PDF created with pdfFactory Pro trial version www.pdffactory.com

## ເພງ: ຂີ້ໝິ້ນເປັນຢາ

ຢູ່ບ້ານເຮົາ ມີຂີ້ໝິ້ນຫຼາຍຊະນິດ
ເບິ່ງແລ້ວພາຄິດ ຢາກຈະເອົາໄປເປັນຢາ
ເພິ່ນວ່າຂີ້ໝິ້ນ ມັນດີແທ້ນາ (ຊ້ຳ)
ທັງໃຊ້ເປັນຢາ ເອົາມາແຕ່ງກິນກໍໄດ້ (ຊ້ຳ)

## ລຳ: ປູກຂີ້ໝິ້ນ

ນ້ອງຢາກ ຈະປູກຂີ້ໝິ້ນ (ຊ້ຳ)
ແຕ່ນອນນ້ອງນາງ ຊິເຮັດຢ່າງໃດ
ວ່າແລ້ວ ກໍຈິ່ງບອກໄປ
ວ່າຂີ້ໝິ້ນ ນັ້ນຄື
ສະໝຸນໄພ ທີ່ນຳໄປເປັນຢາ
ພໍຄິດນານໆ ກໍຄືຂີ້ໝິ້ນນັ້ນເອງ (ຊ້ຳ)
ບາດວ່າຫຼຽວເບິ່ງນັ້ນ ທາງອາຈານເປັນຢາໃຫ້ເບິ່ງ
ຫຼຽວເບິ່ງຊິງ ຄືຊິເຮັດໄດ້
ບາດໄປເຮັດ ເລີຍແມ່ນບໍ່ເປັນ
ໂອນັ້ນລະນາ ຂີ້ໝິ້ນນີ້ເອີຍ (ຊ້ຳ)
ຈັ່ງແມ່ນເຮັດຢາກ ຫຼາຍເດ.

PDF created with pdfFactory Pro trial version www.pdffactory.com

# <u>ຮູບແລະປະຫວັດຂອງຜູ້ຂຽນ</u>



ຊື່ ທ້າວ ເກດສະໜາ

ນາມສະກຸນ ຈັນນະລາດ

ອາຍຸ 23 ປີ

ອາຊີບ ພະນັກງານ

## <u>ເປັນຫຍັງຈຶ່ງຢາກຂຽນຫົວຂໍ້ນີ້</u>

ເພາະວ່າຂີ້ໝີ້ນເປັນພືດຊະນິດໜຶ່ງທີ່ເປັນສະໝຸນໄພສັບພະຄຸນຫຼາຍຢ່າງແລະທັງເປັນພືດທີ່ຄົນຮຸ່ນກ່ອນນິຍົມປູກສະນັ້ນຈຶ່ງຢາກຂຽນບົກໃຫ້ຄົນຮຸ່ນໃໝ່ໄດ້ຮູ້

PDF created with pdfFactory Pro trial version www.pdffactory.com